# ໜັງສືໂກລິນໂທທີ ໒

## ຄຳນຳ

ຈົດໝາຍສະບັບນີ້ ຂຽນທີ່ແຂວງມາເກໂດເນັຍ ເມື່ອປີ ຄ.ສ. ໕໗—໕໘ ເມື່ອເວລາທ່ານໂປໂລພັກຢູ່ທີ່ນັ້ນຊົ່ວຄາວ ຄືພາຍຫລັງທີ່ເພິ່ນອອກຈາກເມືອງເອເຟດແລ້ວ ໃນຈົດໝາຍສະບັບນີ້ ທ່ານໂປໂລໄດ້ສະແດງຄວາມຍາກລຳບາກຂອງຜູ້ຮັບໃຊ້ ຄືທ່ານໂປໂລເອງ ແລະໄດ້ບອກໃຫ້ພວກເຮົາຮູ້ວ່າ ເມື່ອຢູ່ຕໍ່ໜ້າພຣະເຈົ້າແລະຕໍ່ໜ້າຄົນທັງຫລາຍ ທ່ານໂປໂລໄດ້ສະແດງຕົວເປັນແນວໃດ ສ່ວນຫລາຍແລ້ວຈົດໝາຍສະບັບນີ້ໄດ້ຂຽນໄປໃນທຳນອງແກ້ຄວາມ.

## ວ່າດ້ວຍເວລາທີ່ຂຽນ:

ຈົດໝາຍສະບັບນີ້ໄດ້ຂຽນເມື່ອເວລາເພິ່ນຢູ່ແຂວງມາເກໂດເນັຍ ໒:໑໓; ໗:໕; ໙:໒,໔ ຄືພາຍຫລັງທີ່ເພິ່ນໄດ້ອອກຈາກເມືອງເອເຟດແລ້ວ (ກິຈການ ໒໐:໑)

ໃນເວລາທີ່ເພິ່ນຢູ່ເມືອງເອເຟດ ເພິ່ນໄດ້ຂຽນຈົດໝາຍອີກສະບັບໜຶ່ງ ສົ່ງໄປຍັງເມືອງ ໂກລິນໂທ ໂດຍມອບໃຫ້ທ່ານຕີໂຕ ເປັນຜູ້ນຳໄປ (໒:໑໓; ໗:໑໓—໑໕; ໑໒:໑໘) ຈົດໝາຍນີ້ໄດ້ຂຽນກ່ຽວກັບເຣື່ອງພີ່ນ້ອງຄົນໜຶ່ງທີ່ບໍ່ຍອມຟັງເພິ່ນ (໒:໕—໑໑; ໗:໑໒) ຕໍ່ມາທ່ານໂປໂລຢາກພົບກັນກັບທ່ານຕີໂຕອີກທີ່ເມືອງໂທອາດ (໒:໑໒—໑໓) ທ່ານຄິດວ່າບໍ່ສາມາດຈະພົບໄດ້ ເພິ່ນຈຶ່ງຟ້າວເດີນທາງໄປແຂວງມາເກໂດເນັຍ

ແລະໄດ້ພົບທ່ານຕິໂຕຢູ່ທີ່ນັ້ນ (໗ ໕—໖) ພ້ອມທັງໄດ້ຮັບຂ່າວດີຈາກພວກພີ່ນ້ອງ ໃນເມືອງໂກລິນໂທຈຶ່ງ ໄດ້ເປັນ ກຳລັງຊູໃຈ ຂອງ ເພິ່ນ (໗ ໔—໑໖) ແຕ່ກໍຍັງມີບາງຄົນໃນຄຣິສຕະຈັກທີ່ກ່າວຫາເພິ່ນດ້ວຍຄຳບໍ່ຈິງ ສະນັ້ນເພິ່ນຈຶ່ງຂຽນຈົດໝາຍສະບັບທີສອງໄປຍັງເມືອງໂກລິນໂທອີກ ໂດຍໃຫ້ທ່ານຕິໂຕກັບພີ່ນ້ອງຄົນນຶ່ງນຳໜັງສືໄປສົ່ງ (ບົດ ໘:໑໖—໑໘)

## ມູນເຫດທີ່ຂຽນ

໑. ຂຽນໄປ ສະແດງຄວາມຍິນດີ ທີ່ພີ່ນ້ອງ ທັງຫລາຍເຊື່ອຟັງ ແລະກັບໃຈເສັຍໃໝ່ ບົດ ໗:໑ ໑໖

໒. ທ່ານໄປໂລຢາກໃຫ້ພີ່ນ້ອງສົນໃຈໃນການຖວາຍຊັບແກ່ພວກພີ່ນ້ອງທີ່ຂັດສົນຢູ່ກຸງເຢຣູຊາເລັມ ໘:໖; ໙:໑ ໑໓

໓. ຂຽນໄປແກ້ຂໍ້ກ່າວຫາກ່ຽວກັບການປະຕິບັດຂອງເພິ່ນ

໔. ເພື່ອບອກພວກພີ່ນ້ອງວ່າ ເພິ່ນຍັງຈະໄປຢ້ຽມຢາມອີກ ບົດ ໑໓:໑—໑໐

## ການແບ່ງເປັນພາກ:

ພາກທີ ໑ ວ່າດ້ວຍການບົວຣະບັດ ບົດ ໑—໗:

໑ ການຄຳນັບແລະໂມທະນາພຣະຄຸນ ບົດ ໑:໑—໑໑

໒ ບອກມູນເຫດທີ່ຍັງໄປຢ້ຽມຢາມພວກພີ່ນ້ອງບໍ່ໄດ້ ບົດ ໑:໑໒—໒໔

໓ ບອກໃຫ້ພວກພີ່ນ້ອງອະໄພໂທດແກ່ຜູ້ທຳຜິດ ບົດ ໒:໕—໑໑

໔. ວ່າດ້ວຍຄວາມສັດຊື່ຂອງເພິ່ນທີ່ມີຕໍ່
ການບໍຣະບັດໃນຄຳສັນຍາໃໝ່ ບົດ ໒:໑໒–໔:໖

໕. ຄວາມລຳບາກແລະບຳເໜັດແຫ່ງ
ການຮັບໃຊ້ ບົດ ໔:ໆ–໕:໑໐

໖. ການປະຕິບັດນັ້ນຕາມແບບຢ່າງ
ຂອງພຣະຄຣິດ ບົດ ໕:໑໑–໑ໆ

ໆ. ການປະຕິບັດຄືການເຮັດໃຫ້ຄືນເປັນ
ໄມຕຣີກັນກັບພຣະເຈົ້າ ບົດ ໕:໑໘–໖:໒

໘. ເມື່ອເວລາຮັບໃຊ້ ທ່ານໂປໂລໄດ້
ອົດທົນທຸກຢ່າງ ບົດ ໖:໓–໑໐

໙. ການຢູ່ຕ່າງຫາກກັບຄວາມຍິນດີ
ໃນການປະຕິບັດ ບົດ ໖:໑໔–ໆ:໑໖


## ພາກທີ ໒ ວ່າດ້ວຍການແຜ່ເງິນຊ່ວຍຜູ້ຂັດສົນ

ບົດ ໘–໙


໑. ແບບຢ່າງດີຂອງພວກຄຣິສຕຽນ
ໃນແຂວງມາເກໂດເນັຍ ບົດ ໘:໑–໕

໒. ຜູ້ຊ່ວຍທ່ານໂປໂລໃນການນັ້ນ ບົດ ໘:໑໖–໙:໕

໓. ວ່າດ້ວຍການຖວາຍ ບົດ ໙:໖–໑໕

ພາກທີ ໓ ວ່າດ້ວຍຄຳຕອບການປະຕິບັດຂອງດິນ

ບົດ ໑໐–໑໓

໑. ຄຳຕອບຜູ້ທີ່ຕໍ່ສູ້ເມິນ ບົດ ໑໐

໒. ການອົດທົນເພາະເຫັນແກ່ການ

ຮັບໃຊ້ຂອງເມິນ ບົດ ໑໑–໑໒

໓. ອັນທີ່ຈະໄປຢ້ຽມຢາມພວກ

ພີ່ນ້ອງ ບົດ ໑໒:໑໙- ໑໓:໑໐

ເຣື່ອງສຸດທ້າຍ ການສະແດງຄວາມຄຳນັບ

ການໃຫ້ພອນ ບົດ ໑໓:໑໑–໑໔